# ພິທີເຊື່ອມຊຶມ ເອກະສານສຳຄັນ
# ໃຫ້ພະນັກງານຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ

ໃນຕອນເຊົ້າວັນເສົາ, ວັນທີ 17 ກັນຍາ 2022 ທີ່ ສະໂມສອນໃຫຍ່ ສະຖາບັນການທະນາຄານ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດພິທີເຊື່ອມຊຶມເອກະສານສຳຄັນ ໃຫ້ກັບສະມາຊິກພັກ-ພະນັກງານ ທຄຕລ ພາຍໃນນະຄອນຫຼວງວຽງຈັນ, ພາຍໃຕ້ການເປັນປະທານຂອງ **ສະຫາຍ ນ. ສາຍສະໝອນ ຈັນທະຈັກ ກຳມະການພັກ ທຫລ,ເລຂາຄະນະພັກຮາກຖານ, ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.** ໂດຍການເຂົ້າຮ່ວມຂອງ **ທ່ານ ສອນໄຊ ສິດພະໄຊ ກຳມະການສູນກາງພັກ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ອາດີດຜູ້ວ່າການທະນາຄານແຫ່ງ ສປປ ລາວ**, ມີຄະນະບໍລິຫານງານພ້ອມດ້ວຍຄະນະພະແນກ, ຄະນະສູນ, ຄະນະສາຂາ ແລະ ພະນັກງານຂອງ ທຄຕລ 3 ສາຂາ ພາຍໃນນະຄອນຫຼວງວຽງຈັນ ເຂົ້າຮ່ວມທັງໝົດ ຈຳນວນ **815** ຄົນ.




ການຈັດຕັ້ງພິທີເຊື່ອມຊຶມເອກະສານສຳຄັນໃນຄັ້ງນີ້ ໄດ້ດຳເນີນໄປຕາມວາລະໂດຍ ສະຫາຍ ນ. ສາຍສະໝອນ ຈັນທະຈັກ ໄດ້ໃຫ້ກຽດຂຶ້ນເຜີຍແຜ່ມະຕິກອງປະຊຸມຄົບຄະນະ ຄັ້ງທີ 4 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ເຊິ່ງໄດ້ເວົ້າເຖິງບັນຫາທີ່ສຳຄັນດັ່ງນີ້: ການປະເມີນສະພາບແວດລ້ອມຢູ່ພາກພື້ນ ແລະ ສາກົນໃນປະຈຸບັນ ແລະ ຄາດຄະເນທ່າຂະຫຍາຍໃນຕໍ່ໜ້າ; ການຕີລາຄາຜົນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ຕົ້ນປີ 2022 ຕິດພັນກັບຜົນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; ສືບຕໍ່ຍູ້ແຮງການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ຄະນະບໍລິຫານງານສູນກາງພັກໄດ້ປຶກສາຫາລື ແລະ ໃຫ້ທິດຊີ້ນຳກ່ຽວກັບການເສີມຂະຫຍາຍທ່າແຮງ, ຄວາມສາມາດບົ່ມຊ້ອນໃຫ້ກາຍເປັນຂະແໜງເສດຖະກິດປາຍແຫຼມ; ການຊຸກຍູ້, ສົ່ງເສີມຜູ້ປະກອບການທຸລະກິດຂະໜາດນ້ອຍ, ຂະໜາດກາງ ແລະ ຈຸລະວິສາຫະກິດ ໃຫ້ມີຄວາມເຂັ້ມແຂງ; ການເພີ່ມທະວີການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງ; ການປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກການເຄື່ອນໄຫວຂອງອົງການບໍລິຫານລັດຕາມທິດໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ ແລະ ບັນຫາອື່ນໆ.

ຈາກນັ້ນ; ບັນດາຄະນະພັກຮາກຖານ ທຄຕລ ກໍ່ໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ ບົດສະຫຼູບຕີລາຄາການຊີ້ນຳ-ນຳພາວຽກງານຂອງຄະນະບໍລິຫານງານພັກ ທທລ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງ 6 ເດືອນທ້າຍປີ 2022; ມະຕິກອງປະຊຸມເປີດກວ້າງຄົບຄະນະບໍລິຫານງານພັກ ທທລ ຄັ້ງທີ 6 ສະໄໝທີ IV; ແລະ ປາຖະກະຖາວັນຄ້າຍວັນເກີດລະນຶກເຖິງຜົນງານ, ຄຸນງາມຄວາມດີການເຄື່ອນໄຫວຂອງ ທ່ານ ປະທານ ສຸພານຸວົງ ປະທານປະເທດແຫ່ງ ສປປ ລາວ ຜູ້ທຳອິດ ແລະ ເປັນຄັນທຸງແຫ່ງການເຕົ້າໂຮມຄວາມສາມັກຄີຂອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ.

ໃນພິທີດັ່ງກ່າວ ສະຫາຍ ນ. ສາຍສະໝອນ ຈັນທະຈັກ ກຳມະການພັກ ທທລ, ເລຂາຄະນະພັກຮາກຖານ ທຄຕລ ຜູ້ອຳນວຍການ ທຄຕລ ກໍ່ໄດ້ມີການໂອ້ລົມກັບພະນັກງານທູກຄົນ ໃຫ້ມີຄວາມເອົາໃຈໃສ່ໃນວຽກງານການເມືອງ-ແນວຄິດໃຫ້ມີຄວາມເຂົ້າໃຈ ແລະ ເປັນເອກະພາບສູງຕໍ່ການຊີ້ນຳ-ນຳພາ, ເອົາໃຈໃສ່ສືບຕໍ່ປັບປຸງກົງຈັກການຈັດຕັ້ງພາຍໃນ ທຄຕລ ໃຫ້ມີຄວາມເຂັ້ມແຂງ, ສືບຕໍ່ສ້າງ ແລະ ຂະຫຍາຍສະມາຊິກພັກທີ່ມີຄຸນະພາບ ແລະ ສຸມໃສ່ການສືບຕໍ່ແກ້ໄຂວຽກງານວິຊາສະເພາະ ໂດຍສະເພາະແມ່ນວຽກງານສິນເຊື່ອ. ພ້ອມດຽວກັນນັ້ນ, ກໍ່ໃຫ້ເອົາໃຈໃສ່ວຽກງານການໃຫ້ບໍລິການລູກຄ້າ ໂດຍພະນັກງານທຸກຄົນຕ້ອງໄດ້ຮັບຟັງບັນຫາ ແລະ ແກ້ໄຂບັນຫາຊ່ວຍລູກຄ້າເພື່ອຊອກຫາທາງອອກຮ່ວມກັນ ທັງນີ້ກໍ່ເພື່ອສືບຕໍ່ພັດທະນາ ທຄຕລ ໃຫ້ເປັນທະນາຄານຢູ່ໃນແຖວໜ້າຂອງ ສປປ ລາວ.

ພ້ອມກັນນັ້ນ; ໃນຕອນທ້າຍຂອງພິທີໄດ້ຮັບກຽດຈາກ ສະຫາຍ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ອາດີດຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ໃຫ້ກຽດໂອ້ລົມຕໍ່ສະມາຊິກພັກ-ພະນັກງານ ທຄຕລ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ການຊີ້ນຳ-ນຳພາຂອງຄະນະບໍລິຫານງານຂອງ ທຄຕລ ໃນໄລຍະຜ່ານມາ, ສະຫາຍໄດ້ຍົກໃຫ້ເຫັນເຖິງມູນເຊື້ອອັນດີງາມຂອງ ທຄຕລ ໃນໄລຍະຜ່ານມາທີ່ໄດ້ມີການສ້າງສາ ແລະ ພັດທະນາ ໃຫ້ເປັນທະນາຄານແຖວໜ້າຂອງ ສປປ ລາວ ແລະ ພ້ອມທັງປຸກລະດົມຈິດໃຈຂອງພະນັກງານໃຫ້ສືບຕໍ່ຮັກສາມູນເຊື້ອ, ຈົງຮັກພັກດີຕໍ່ອົງກອນ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປະຕິບັດໜ້າທີ່ວຽກງານໃນທ່າມກາງສະພາບເສດຖະກິດທີ່ມີຄວາມຫຍຸ້ງຍາກໃນປະຈຸບັນເພື່ອເຮັດໃຫ້ ທຄຕລ ຍັງຄົງເປັນທະນະຄານແຖວໜ້າຂອງ ສປປ ລາວ ແລະ ຄວາມເຊື່ອໝັ້ນຂອງສັງຄົມ. ຄຽງຄູ່ກັນນັ້ນສະຫາຍຍັງໄດ້ສະແດງຄວາມເປັນຫ່ວງເປັນໄຍຕໍ່ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆທີ່ກຳລັງປະເຊີນໃນປະຈຸບັນ ພ້ອມທັງຮຽກຮ້ອງໃຫ້ພະນັກງານ ທຄຕລ ທຸກຄົນຮ່ວມແຮງຮ່ວມໃຈກັນເປັນຈິດໜຶ່ງໃຈດຽວ ເພື່ອພ້ອມກັນຜ່ານຜ່າຂໍ້ຫຍຸ້ງຍາກຕ່າງໆ ແລະ ພ້ອມກັນພັດທະນາ ທຄຕລ ໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ.





ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ